ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1247 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2020

# ແຈ້ງການ

**ເຖິງ: ບັນດາທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020.**

**ເລື່ອງ: ການສອບເສັງຄັດເລືອກລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020 ຮອບທີ II ໃນສາຂາວິຊາ ໄອທີ ແລະ ການເງິນ-ການບັນຊີ.**

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 5000/ກງ, ລົງວັນທີ 18 ທັນວາ 2019;
- ອີງຕາມ ຜົນຄະແນນສອບເສັງຄັດເລືອກລັດຖະກອນໃໝ່ ປີ 2020 ຄັ້ງວັນທີ 15 ກໍລະກົດ 2020.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ແລະ ຂະແໜງການເງິນຂັ້ນທ້ອງຖິ່ນ ປີ 2020 ໃນສາຂາວິຊາໄອທີ ແລະ ການເງິນ-ການບັນຊີ ທີ່ເຂົ້າຮ່ວມການສອບເສັງ ຄັ້ງວັນທີ 15 ກໍລະກົດ 2020 ຊຶ່ງຄະນະຮັບຜິດຊອບສອບເສັງລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020 ຈະໄດ້ມີການສອບເສັງ ໃນຮອບທີ II ຄັ້ງວັນທີ 29 ສິງຫາ 2020 ສະເພາະຜູ້ທີ່ໄດ້ລະດັບຄາດໝາຍເພື່ອຄັດເລືອກບັນຈຸເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020. **ສະນັ້ນ, ຖ້າຜູ້ປົກຄອງຂອງນັກສອບເສັງທ່ານໃດມີຄວາມສົນໃຈຢາກມາຕິດຕາມເບິ່ງການສອບເສັງແມ່ນໃຫ້ເຂົ້າມາຕິດຕາມເບິ່ງໄດ້ຢູ່ໃນສະຖານທີ່ສອບເສັງເລີ່ມແຕ່ເວລາ 8:00 ໂມງ ເປັນຕົ້ນໄປ ຊຶ່ງມີລາຍລະອຽດດັ່ງນີ້:**

1. ສອບເສັງສາຂາວິຊາໄອທີແມ່ນສອບເສັງຢູ່ທີ່ຕຶກກົມສ່ວຍສາອາກອນກະຊວງການເງິນ (**ຊັ້ນ 1**);
2. ສອບເສັງເຂົ້າເປັນລັດຖະກອນໃໝ່ຂອງແຂວງວຽງຈັນ, ບໍລິຄຳໄຊ ແລະ ໄຊສົມບູນ ແມ່ນສອບເສັງຢູ່ສະຖາບັນເສດຖະກິດ-ການເງິນ (**ນະຄອນຫຼວງວຽງຈັນ**);
3. ສອບເສັງເຂົ້າເປັນລັດຖະກອນໃໝ່ຂອງແຂວງຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ, ໄຊຍະບູລີ, ຫຼວງພະບາງ, ຊຽງຂວາງ ແລະ ຫົວພັນ ແມ່ນສອບເສັງຢູ່ວິທະຍາໄລການເງິນພາກເໜືອ (**ແຂວງຫຼວງພະບາງ**);
4. ສອບເສັງເຂົ້າເປັນລັດຖະກອນໃໝ່ຂອງແຂວງສາລະວັນ, ເຊກອງ ແລະ ອັດຕະປື ແມ່ນສອບເສັງຢູ່ວິທະຍາໄລການເງິນພາກໃຕ້ (**ແຂວງຈຳປາສັກ**).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຮັກສາການຫົວໜ້າກົມ**

**ສອບຖາມຂໍ້ມູນເພີ່ມເຕີມໂທ**

**ກົມຈັດຕັ້ງ ແລະ ພະນັກງານ**

**021 451836, 020 22222883**

ກະຊວງການເງິນ ກົມຈັດຕັ້ງແລະພະນັກງານ

**ກົງຄຳ ສິດທິວົງລະດາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1246 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2020

# ແຈ້ງການ

**ເຖິງ: ບັນດາທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020.**

**ເລື່ອງ: ການສອບເສັງຄັດເລືອກລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020 ຮອບທີ II ໃນສາຂາວິຊາພາສາອັງກິດ.**

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 5000/ກງ, ລົງວັນທີ 18 ທັນວາ 2019;
- ອີງຕາມ ຜົນຄະແນນສອບເສັງຄັດເລືອກລັດຖະກອນໃໝ່ ປີ 2020 ຄັ້ງວັນທີ 15 ກໍລະກົດ 2020.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ປົກຄອງຂອງຜູ້ທີ່ສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ໃນສາຂາວິຊາພາສາອັງກິດ ທີ່ເຂົ້າຮ່ວມການສອບເສັງ ຄັ້ງວັນທີ 15 ກໍລະກົດ 2020 ຊຶ່ງຄະນະຮັບຜິດຊອບສອບເສັງລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020 ຈະໄດ້ມີການສຳພາດ ໃນຮອບທີ II ຄັ້ງວັນທີ 21 ສິງຫາ 2020 ສະເພາະຜູ້ທີ່ໄດ້ລະດັບຄາດໝາຍເພື່ອຄັດເລືອກບັນຈຸເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2020. **ສະນັ້ນ, ຖ້າຜູ້ປົກຄອງຂອງນັກສອບເສັງທ່ານໃດມີຄວາມສົນໃຈ**ຢາກມາຕິດຕາມເບິ່ງການສຳພາດແມ່ນໃຫ້ເຂົ້າມາຕິດຕາມເບິ່ງໄດ້ທີ່ຫ້ອງປະຊຸມຂອງກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ກະຊວງການເງິນ (ຊັ້ນ 2) ເລີ່ມແຕ່ເວລາ 8:00 ໂມງ ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

**ຮັກສາການຫົວໜ້າກົມ**

ກົມການເງິນ ກະຊວງການເງິນ

ກົມຈັດຕັ້ງແລະພະນັກງານ

**ກົງຄຳ ສິດທິວົງລະດາ**

**ສອບຖາມຂໍ້ມູນເພີ່ມເຕີມໂທ**

**ກົມຈັດຕັ້ງ ແລະ ພະນັກງານ**

**021 451836, 020 22222883**